# ບົດລາຍງານ




## ຝຶກອົບຮົມກ່ຽວກັບ ການໄລຟ໌ສົດຜ່ານເຟສບຸກ

**17 ສິງຫາ 2022**

ລາຍງານໂດຍ

ສຳພັນ ລາດສະກິດ

*ຜູ້ບໍລິຫານເວບໄຊ - ເກຣດ ປະຈຳ ສ ປປ ລາວ*

Under

Agroecology and Safe Food System Transitions

Funded by

AFD

## I. ຄວາມເປັນມາ

ເພື່ອຍົກລະດັບຄວາມອາດສາມາດດ້ານການນຳໃຊ້ເຄື່ອງມືສື່ສານໃຫ້ແກ່ສະມາຊິກອາລິເຊຍ. ດັ່ງນັ້ນ, ພວກເຮົາຈຶ່ງໄດ້ຈັດຝຶກອົບຮົມກ່ຽວກັບ ວິທີການນຳໃຊ້ເຄື່ອງມື OBS studio ເພື່ອຊ່ວຍໃນການໄລຟສົດຜ່ານເຟສບຸກໃຫ້ມີປະສິດທິພາບຂຶ້ນ.

**ວັນທີ**: 17 ສິງຫາ 2022

**ສະຖານທີ່**: ຫ້ອງການ ເກຣດ ປະຈຳ ສປປ ລາວ, ບ້ານ ສະພານທອງເໜືອ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສ ປປ ລາວ.

## II. ຜູ້ເຂົ້າຮ່ວມ ແລະ ວິທະຍາກອນ

**ຜູ້ເຂົ້າຮ່ວມ**: ໃນການຝຶກອົບຮົມຄັ້ງນີ້ມີຜູ້ເຂົ້າຮ່ວມ ຈຳນວນທັງໝົດ 12 ທ່ານ ທີ່ມາຈາກ 9 ພາກສ່ວນ ທີ່ເປັນສະມາຊິກຂອງເຄືອຂ່າຍອາລິເຊຍໃນລາວ ດັ່ງມີລາຍຊື່ລຸ່ມນີ້:

| ລ/ດ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ພາກສ່ວນ | ເບີໂທ |
|---|---|---|---|---|
| 1 | ນ. ທິບພະຈັນ ພູດາວົງ | Communication and Media | ARMI | 5708 0044 |
| 2 | ນ. ຄຳພອນ ແສງທະວົງ | Promotion officer | ARMI | 7628 1858 |
| 3 | ທ. ສັນຕິສຸກ ວົງສາລາດ | Technical Staff | LaoDHRRA | 9320 8001 |
| 4 | ນ. ຈິນຕະນາພອນ ແກ້ວວິຈິດ | KM officer | CLICK | 7771 4900 |
| 5 | ນ. ພູວຽງ ຄູນປະເສີດ | Project officer | LBA | 2899 4555 |
| 6 | ນ. ບົວວັນ ພົມມະວັນ | Project officer | LBA | 5407 2002 |
| 7 | ນ. ອາລິສາ ພົງສະຫວັດ | Admin | CDEA | 7878 5574 |
| 8 | ທ. ສຸເມດ ພອນປະເສີດ | Communication | RDA | 7801 0015 |
| 9 | ນ. ພອນປະເສີດ ຜາພູເງິນ | Coordinator | LFN | 5450 2400 |
| 10 | ນ. ແສງມະນີ ອິຍະ | Volunteer | MHP | 9845 4286 |
| 11 | ທ. ສຳພັນ ລາດສະກິດ | Web Content Manager | GRET | 2803 7322 |
| 12 | ນ. ມະນີວັນ ອາລິຍະວົງ | Small grant | GRET | 5587 9874 |

Under
Agroecology and Safe Food System Transitions
Funded by
AFD
FFEM



<u>ຮູບທີ 1</u>: ຮູບພາບລວມຂອງຜູ້ເຂົ້າຮ່ວມຝຶກອົບຮົມ

**<u>ວິທະຍາກອນ:</u>**

- **ພອນປະເສີດ ຜາພູເງິນ**: ເປັນຜູ້ປະສານງານຂອງ ເຄືອຂ່າຍຊາວກະສິກອນລາວ ເຊິ່ງມີປະສົບການໃນການເປັນຜູ້ຈັດ, ຜູ້ດູແລງານ ແລະ ດຳເນີນລາຍການໄລຟສົດ ຂອງເຄືອຂ່າຍຊາວກະສິກອນລາວເຊັ່ນ: https://fb.watch/eZqmoyqWJu/
- **ສຸເມດ ພອນປະເສີດ**: ເປັນພະນັກງານສື່ສານ ຢູ່ໃນໜ່ວຍງານ InYouth Production ຂອງ ສູນພັດທະນາຊົນນະບົດ ໂດຍມີປະສົບການໃນການເປັນຜູ້ດູແລງານໄລຟສົດຕ່າງໆ ຂອງສູນພັດທະນາຊົນນະບົດເຊັ່ນ: https://www.facebook.com/RDALAOS/videos/1205415310288104

## III. ການດຳເນີນງານ

### 1) ວັດລະດັບກ່ອນການຝຶກ

- **ປະສົບການຂອງຜູ້ເຂົ້າຮ່ວມ:** ຜູ້ເຂົ້າຮ່ວມທຸກຄົນຮູ້ຈັກການໄລຟສົດຜ່ານເຟສບຸກ ໂດຍຈະເຂົ້າເບິ່ງການໄລຟສົດຂາຍເຄື່ອງອອນລາຍ, ການຈັດງານຕ່າງໆ, ເບິ່ງເກມເມີສະຕີມເກມອອນລາຍ... ມີຜູ້ເຂົ້າຮ່ວມບາງຄົນແມ່ນມີປະສົບການໃນການໄລຟສົດຂາຍເຄື່ອງອອນລາຍຜ່ານເຟສບຸກ, ແຕ່ບໍ່ມີໃຜເລີຍທີ່ນຳໃຊ້ໂປແກຼມ OBS studio ເຂົ້າໃນການໄລຟສົດ.
- **ສິ່ງທີ່ຢາກຮູ້/ ຄວາມຄາດຫວັງ:** ຜູ້ເຂົ້າຮ່ວມທຸກຄົນຢາກຮູ້ວິທີການໄລຟສົດ, ອຸປະກອນ ແລະ ເຄື່ອງມື ທີ່ຈະນຳໃຊ້ເຂົ້າໃນການໄລຟສົດ ແລະ ນອກຈາກນີ້ຍັງຢາກຮູ້ເຕັກນິກວິທີການໃນການໄລຟ, ການສ້າງຄວາມ

ສົນໃຈ ແລະ ດຶງດູດຜູ້ຄົນໃຫ້ເຂົ້າມາເບິ່ງ ແລະ ກົດຕິດຕາມເພສຂອງພວກເຮົາຫຼາຍຂຶ້ນ, ຫົວຂໍ້ຕ່າງໆທີ່ຈະນຳມາໄລຟ...



ຮູບທີ 2: ໂນດຂອງຜູ້ເຂົ້າຮ່ວມກ່ຽວກັບປະສົບການທີ່ຜ່ານມາໃນການໄລຟສົດ ແລະ ສິ່ງທີ່ຢາກຮຽນຮູ້/ ສິ່ງທີ່ຄາດຫວັງຈາກການຝຶກອົບຮົມຄັ້ງນີ້.

2) **ແຊປະສົບການໃນການໄລຟສົດທີ່ຜ່ານເຟສບຸກ ໂດຍຜ່ານການແຊໄລຟຈາກ Zoom ແລະ ໄລຟໂດຍກົງຜ່ານເຟສບຸກແອັບໄລຟ ຂອງ ພອນປະເສີດ ຜາພູເງິນ (LFN):** ໂດຍເລີ່ມຈາກເຫດຜົນທີ່ເຮັດໃຫ້ເກີດການໄລຟສົດຜ່ານເຟສບຸກເພສຂອງເຄືອຂ່າຍຊາວກະສິກອນລາວ ເພາະວ່າໃນຊ່ວງທີ່ພະຍາດໂຄວິດ-19 ລະບາດເຮັດໃຫ້ບໍ່ສາມາດພົບປະແບບເຊິ່ງໜ້າກັນ ດັ່ງນັ້ນຈຶ່ງນຳໃຊ້ວິທີພົບປະ, ປະຊຸມ/ ແລກປ່ຽນ ແບບອອນລາຍຜ່ານ Zoom ແລະ ໄລຟສົດຜ່ານເຟສບຸກ ເຊິ່ງການເຮັດແບບນີ້ແມ່ນສາມາດເຮັດໄດ້ງ່າຍ, ສະດວກສະບາຍ, ບໍ່ມີຂັ້ນຕອນທີ່ຫຍຸ້ງຍາກ, ຢູ່ໃສກໍສາມາດເຂົ້າຮ່ວມໄດ້ ພຽງແຕ່ມີສັນຍານອິນເຕີເນັດ. ແຕ່ມັນກໍມີຂໍ້ເສຍເຊັ່ນວ່າ:

- ບໍ່ສາມາດຄວບຄຸມ, ຕົກແຕ່ງ ແລະ ໃສ່ລູກຫຼິ້ນຕ່າງໆໄດ້ໃນຂະນະໄລຟສົດ
- ບໍ່ສາມາດຄວບຄຸມພາບ ແລະ ສຽງທີ່ບໍ່ຕ້ອງການທີ່ເກີດຂຶ້ນໃນຂະນະໄລຟສົດໄດ້
- ຈະໂຊວິດີໂອຂອງຜູ້ທີ່ກຳລັງໄລຟສົດເທົ່ານັ້ນ ບໍ່ສາມາດສາຍຮູບພາບ/ ວິດີໂອ ຫຼື ເອກະສານອື່ນ ໃນຂະນະທີ່ໄລຟສົດ (ກໍລະນີໄລຟສົດໂດຍກົງຜ່ານແອັບເຟສບຸກໄລຟ)
- ມີລາຍເຊັນຂອງ Zoom ໂຊຂຶ້ນຢູ່ຕະຫຼອດເວລາ ໃນກໍລະນີແຊໄລຟຈາກ Zoom
- ຕ້ອງຄວບຄຸມທຸກຢ່າງຢູ່ໃນ Zoom ໃນກໍລະນີແຊໄລຟຈາກ Zoom
- ຕ້ອງແມ່ນຜູ້ສ້າງຫ້ອງເທົ່ານັ້ນ ທີ່ສາມາດແຊໄລຟຈາກ Zoom ໄປຍັງເຟສບຸກໄດ້ (Co-host ບໍ່ສາມແຊໄດ້)



ຮູບທີ 3: ພອນປະເສີດ ຜາພູເງິນ ກຳລັງແຊປະສົບການທີ່ຜ່ານມາ ກ່ຽວກັບການໄລຟສົດຜ່ານເຟສບຸກ.

3) **ນຳສະເໜີກ່ຽວກັບການນຳໃຊ້ OBS studio ແລະ ອຸປະກອນ/ເຄື່ອງມືຕ່າງໆ ເຂົ້າໃນການໄລຟສົດ ຂອງ ສຸເມດ ພອນປະເສີດ (RDA):** ໂດຍເລີ່ມຈາກການນຳເໜີຜ່ານບົດນຳສະເໜີກ່ຽວກັບສິ່ງທີ່ຕ້ອງກະກຽມກ່ອນທີ່ຈະເຮັດການໄລຟສົດຜ່ານເຟສບຸກ ໂດຍນຳໃຊ້ໂປຣແກຼມ OBS studio ເຂົ້າມາຊ່ວຍ, ແນະນຳວິທີຕິດຕັ້ງໂປຼແກຼມທີ່ກ່ຽວຂ້ອງ, ອຸປະກອນຕ່າງໆທີ່ຈະໃຊ້ເຂົ້າໃນການໄລຟ.

> ***OBS studio ຫຍໍ້ມາຈາກ Open Broadcaster Software ເປັນໂປຼແກຼມທີ່ຊ່ວຍໃນການຄວບຄຸມ, ຕົກແຕ່ງ ແລະ ໃສ່ລູກຫຼິ້ນຕ່າງໆ ໃນການສະຕີມ (live stream) ແລະ ບັນທຶກວິດີ***

ຫຼັງຈາກນັ້ນ ກໍໄດ້ສາທິດຕົວຈິງໃນການຕິດຕັ້ງໂທລະສັບມືຖື/ ກ້ອງຖ່າຍຮູບ ສຳລັບຖ່າຍວິດີໂອ ແລະ ວິທີການເອົາຮູບພາບ, ວິດີໂອ, ສຽງ, ລູກຫລິ້ນຕ່າງໆ ເຂົ້າໄປຍັງ ໂປຼແກຼມ OBS ເພື່ອກຽມພ້ອມສຳລັບການໄລຟສະຕີມ. ຕໍ່ຈາກນັ້ນ, ກໍທົດລອງໃສ່ລູກຫລິ້ນຕ່າງໆ ຢູ່ໃນຫ້ອງພິວິວຂອງ ໂປຼແກຼມ OBS ເພື່ອກຽມຄວາມພ້ອມກ່ອນການໄລຟ. ຫຼັງຈາກກຽມຄວາມພ້ອມໝົດແລ້ວ ກໍທົດລອງໄລຟສົດໄປຍັງເຟສບຸກສ່ວນຕົວຂອງແຕ່ລະຜູ້ເຂົ້າຮ່ວມ ແລ້ວໃຫ້ໝູ່ຊ່ວຍເບິ່ງ ແລະ ໃຫ້ຄຳແນະນຳ.



<u>ຮູບທີ 4</u>: ສຸເມດ ພອນປະເສີດ ກຳລັງນຳສະເໜີກ່ຽວກັບເຄື່ອງມື ແລະ ອຸປະກອນທີ່ຈະໃຊ້ເຂົ້າໃນການໄລຟສົດ.

4) **ສັງລວມການຝຶກ**: ຜ່ານການຝຶກອົບຮົມຄັ້ງນີ້ ເຮັດໃຫ້ຜູ້ເຂົ້າຮ່ວມໄດ້ຮຽນຮູ້ຫລາຍໆຢ່າງກ່ຽວກັບການໄລຟສົດຜ່ານເຟສບຸກ ໂດຍຜ່ານການແຊໄລຟຈາກ Zoom, ການໄລຟໂດຍກົງຜ່ານແອັບເຟສບຸກໄລຟ ຫຼື ການໃຊ້ OBS studio ເຂົ້າມາຊ່ວຍໃນການໄລຟ ໂດຍໄດ້ສັງລວມທັງຂໍ້ດີ, ຂໍ້ຫຍຸ້ງຍາກ ແລະຂໍ້ຄວນລະວັງ ດັ່ງນີ້:

**<u>ການແຊໄລຟຈາກ Zoom:</u>**

- ການຄວບຄຸມທຸກຢ່າງແມ່ນຕ້ອງຄວບຄຸມຢູ່ໃນ Zoom
- ຕ້ອງມີຜູ້ຊ່ວຍເປັນ co-host ເພື່ອຊ່ວຍໃນການປິດ/ເປີດ ວິດີໂອ ແລະ ສຽງ ຈາກຜູ້ເຂົ້າຮ່ວມຢູ່ໃນຫ້ອງສົນທະນານັ້ນ.
- ບໍ່ສາມາດຕັດພາບ ແລະ ສຽງ ບາງຊ່ວງທີ່ເກີດຂຶ້ນໄປແລ້ວໄດ້
- ພາບ ແລະ ສຽງຈະຊ້າກວ່າໃນໄລຟ Zoom ປະມານ 20 ວິນາທີ
- ການເປີດ/ ປິດ ວິດີໂອ ຂອງຜູ້ເຂົ້າຮ່ວມແມ່ນມີຜົນຊັດເຈນທີ່ຈະເຮັດໃຫ້ພາບດັ່ງກ່າວໂຊໄປຍັງໜ້າໄລຟ
- ມີລາຍເຊັນຂອງ Zoom ໂຊຂຶ້ນຢູ່ຕະຫຼອດເວລາ ໃນກໍລະນີແຊໄລຟຈາກ Zoom

Under

Agroecology and Safe Food System Transitions

Funded by

AFD




ຮູບທີ 5: ຮູບຕົວຢ່າງການແຊໄລຟຈາກ Zoom ໄປຍັງເຟສບຸກໄລຟ

**<u>ການໄລຟໂດຍກົງຜ່ານແອັບເຟສບຸກໄລຟ:</u>**

- ຈະໂຊຂຶ້ນພຽງແຕ່ໜ້າຜູ້ໄລຟເທົ່ານັ້ນ, ບໍ່ສາມາດໂຊຮູບພາບ ຫຼື ວິດີໂອ ໃນຂະນະທີ່ໄລຟໄດ້
- ບໍ່ມີລູກຫລິ້ນເລີຍ



ຮູບທີ 6: ຮູບຕົວຢ່າງ ການໄລຟສົດໂດຍກົງຜ່ານແອັບເຟສບຸກໄລຟ

Under
Agroecology and Safe Food System Transitions

Funded by
AFD
FFEM

## ການໄລຟໂດຍຕົງຜ່ານແອັບເຟສບຸກໄລຟ ແລະ ຜ່ານໂປຼແກຼມ OBS studio:

- ສາມາດພີວິວຮູບພາບ, ວິດີໂອ ກ່ອນທີ່ຈະແຊໄປຍັງໜ້າໄລຟສົດໄດ້
- ສາມາດໃສ່ລູກຫລິ້ນ, ຕົກແຕ່ງໜ້າໄລຟໄດ້
- ອາດຈະໃຊ້ກ້ອງພາຍນອກເຂົ້າມາຊ່ວຍໃນການໄລຟ ແລະ ສາມາດນຳໃຊ້ຫລາຍກ້ອງໃນເວລາດຽວກັນ ດັ່ງນັ້ນຕ້ອງມີຜູ້ດູແລກ້ອງ ແລະ ມີຜູ້ຄວາມຄວາມກ້ອງທີ່ດີ
- ມີອຸປະກອນເຂົ້າມາເສີມຫລາຍໆຢ່າງ
- ສາມາດຄວບຄຸມສຽງໄດ້ ແຕ່ບໍ່ສາມາດຟັງສຽງໄດ້ໃນຂະນະທີ່ກຳລັງດູແລການໄລຟສົດຢູ່ໃນ OBS, ດັ່ງນັ້ນ ຈຳເປັນຕ້ອງເບິ່ງໄລຟສົດຜ່ານເຄື່ອງອື່ນເພື່ອຕິດຕາມສຽງ




<u>ຮູບທີ 7</u>: ຮູບຕົວຢ່າງ ການໄລຟໂດຍຕົງຜ່ານແອັບເຟສບຸກໄລຟ ໂດຍຜ່ານໂປຼແກຼມ OBS studio

| <u>ຂໍ້ຄວນລະວັງໃນການໄລຟສົດຜ່ານເຟສບຸກ</u>: |
| --- |
| 1) ຮູບພາບ, ວິດີໂອທີ່ຈະນຳໃຊ້ເຂົ້າໃນການໄລຟສົດ ຕ້ອງບໍ່ຕິດລິຂະສິດ |
| 2) ອິນເຕີເນັດຕ້ອງໄວ ແລະ ສະຖຽນ |
| 3) ການໄລຟສົດຄືການໄລສະຕີມແບບ Real-time ຕ້ອງລະວັງຄຳເວົ້າ, ກິລິຍາທ່າທາງຕ່າງໆ |

Under
Agroecology and Safe Food System Transitions
Funded by

## IV. ສະຫລຸບ

ການຝຶກອົບຮົມໃນຄັ້ງນີ້ ແມ່ນມີຫຼາຍພາກສ່ວນໃຫ້ຄວາມສົນໃຈ ແລະ ຢາກເຂົ້າຮ່ວມນຳ ໂດຍສະເພາະທາງຕ່າງໆແຂວງ ແຕ່ເນື່ອງຈາກເປັນການຝຶກອົບຮົມໃນຮູບແບບນີ້ເປັນຄັ້ງທຳອິດ ແລະ ຈັດເປັນຮູບແບບການແລກປ່ຽນເຊິ່ງກັນ ແລະ ກັນ, ດັ່ງນັ້ນພວກເຮົາຈຶ່ງໄດ້ຈຳກັດຈຳນວນຜູ້ເຂົ້າຮ່ວມ ແລະ ມີງົບປະມານທີ່ຈຳກັດ ເລີຍຈຳເປັນຕ້ອງໄດ້ປະຕິເສດຫລາຍໆພາກສ່ວນ ໂດຍສະເພາະພາກສ່ວນທີ່ຢູ່ຕ່າງແຂວງ ເພາະພວກເຮົາບໍ່ມີງົບປະມານສຳລັບການເດີນທາງ ແລະ ທີ່ພັກໃຫ້.

ການຝຶກອົບຮົມໃນຮູບແບບແລກປ່ຽນເຊິ່ງກັນ ແລະ ກັນ ລະຫວ່າງສະມາຊິກອາລິເຊຍໃນຄັ້ງນີ້ ຖືໄດ້ວ່າເປັນການລິເລີ່ມການສ້າງຄວາມອາດສາມາດໃຫ້ແກ່ສະມາຊິອາລິເຊຍ ແລະ ກໍໄດ້ຮັບຜົນຕອບຮັບທີ່ດີຫລາຍໆ ແລະ ຜົນທີ່ຕາມມາກໍຄືຈະເຮັດໃຫ້ເກີດມີກິດຈະກຳໃຫມ່ໆເກີດຂຶ້ນມາອີກເລື້ອຍໆ.



ຮູບທີ 8: ຮູບພາບການເຄື່ອນໄຫວພາຍໃນງານ